ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 111 ປປທ

ນະຄອນຫຼວງວຽງຈັນ, ວັນທີ 18 ສິງຫາ 2008

# ລັດຖະດຳລັດ

## ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດ**
**ຄຳຕັດສິນຂອງສານ ( ສະບັບປັບປຸງ )**

~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 97/ສພຊ, ລົງວັນທີ 25 ກໍລະກົດ 2008 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ);
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 25/ຄປຈ, ລົງວັນທີ 11 ສິງຫາ 2008.

*ປະທານປະເທດ*
*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ).

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ
~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 97 /ສພຊ

**ມະຕິຕົກລົງ**

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ)

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ໃນວາລະປະຊຸມຕອນບ່າຍຂອງວັນທີ 25 ກໍລະກົດ 2008,

**ກອງປະຊຸມໄດ້ຕົກລົງ:**

<u>ມາດຕາ 1</u>. ຮັບຮອງເອົາກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີ ເປັນສ່ວນຫລາຍ.

<u>ມາດຕາ 2</u>. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 25 ກໍລະກົດ 2008

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ

ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ

ເລກທີ 04 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 ກໍລະກົດ 2008

# ກົດໝາຍ
# ວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກຳນົດ ຫລັກການ, ລະບຽບການ, ວິທີການ ແລະມາດຕະການ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານທາງແພ່ງ; ກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແຕ່ສູນກາງລົງຮອດທ້ອງຖິ່ນ ລວມທັງສິດ ແລະ ໜ້າທີ່ຂອງພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແນໃສ່ເຮັດໃຫ້ຄຳຕັດສິນຂອງສານ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ຖືກຕ້ອງ, ວ່ອງໄວ ແລະ ເປັນເອກະພາບໃນທົ່ວປະເທດ; ເພີ່ມທະວີຄວາມສັກສິດຂອງອຳນາດລັດ ແລະ ຂອງກົດໝາຍ; ປົກປ້ອງສິດ,. ຜົນປະໂຫຍດຂອງລັດ, ສິດຜົນປະໂຫຍດອັນຊອບທຳຂອງລວມໝູ່ ແລະ ຂອງພົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມຍຸຕິທຳ.

**ມາດຕາ 2. ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນ ການນຳເອົາຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລະນິຕິກຳອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5(ໃໝ່) ຂອງກົດໝາຍສະບັບນີ້ ມາຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະປາກົດຜົນເປັນຈິງ ເພື່ອຟື້ນຟູສິດ ແລະຜົນປະໂຫຍດຂອງລັດ, ລວມໝູ່ ແລະພົນລະເມືອງ ທີ່ຖືກລະເມີດ ຫລື ສູນເສຍໄປ.

ມາດຕາ 3(ໃໝ່). **ການອະທິບາຍຄໍາສັບ**

ຄໍາສັບຕ່າງໆທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄໍາສັ່ງ** ໝາຍເຖິງ ນິຕິກໍາທີ່ມີລັກສະນະບໍລິຫານຂອງສານ ເຊັ່ນ: ຄໍາສັ່ງໃຫ້ປະຕິບັດບົດບັນທຶກການໄກ່ເກ່ຍຂອງສານ, ຄໍາສັ່ງອາຍັດຊັບ ຫລື ຍຶດຊັບ;
2. **ຄໍາຊີ້ຂາດ** ໝາຍເຖິງ ນິຕິກໍາຂອງສານປະຊາຊົນ ທີ່ມີລັກສະນະຕຸລາການ ຊຶ່ງຄະນະສານຕົກລົງ ກ່ອນການຕັດສິນໃນເນື້ອຄະດີ ເຊັ່ນ: ຄໍາຊີ້ຂາດກ່ຽວກັບການຂໍຄ່າໃຊ້ຈ່າຍໃນການປິ່ນປົວ ກ່ອນການໃຊ້ແທນຄ່າເສັຍຫາຍໃນເນື້ອຄະດີ, ຄໍາຊີ້ຂາດໃຫ້ປະຕິບັດກ່ຽວກັບການ ຢັ້ງຢືນເອກະສານ ຂອງສໍານັກງານທະບຽນສານ;
3. **ຄໍາຕັດສິນ** ໝາຍເຖິງ ຄໍາຕົກລົງຂອງຄະນະສານ ຂອງສານປະຊາຊົນເມືອງ, ເທດສະບານ ແລະ ສານປະຊາຊົນແຂວງ, ນະຄອນ ເປັນຂັ້ນຕົ້ນ;
4. **ຄໍາພິພາກສາ** ໝາຍເຖິງ ຄໍາຕັດສິນຂອງສານປະຊາຊົນແຂວງ, ນະຄອນ ເປັນຂັ້ນອຸທອນ, ຂອງສານອຸທອນ ແລະ ຂອງສານປະຊາຊົນສູງສຸດ ເປັນຂັ້ນລົບລ້າງ;
5. **ບົດບັນທຶກການໄກ່ເກ່ຍຂອງສານ** ໝາຍເຖິງ ເອກະສານຢັ້ງຢືນຜົນຂອງການໄກ່ເກ່ຍຂອງສານ. ຄໍາຕົກລົງຂອງການໄກ່ເກ່ຍນີ້ ແມ່ນ ມີຜົນບັງຄັບປະຕິບັດຄືກັບຄໍາຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
6. **ບົດບັນທຶກການໄກ່ເກ່ຍຂອງຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ** ໝາຍເຖິງ ເອກະສານຢັ້ງຢືນຜົນຂອງການໄກ່ເກ່ຍ ຂອງຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
7. **ຄໍາຕັດສິນຂອງຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ** ໝາຍເຖິງ ຄໍາຕົກລົງຂອງຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
8. **ຄໍາຂໍອຸທອນ** ໝາຍເຖິງ ການຈອງຂໍອຸທອນຕາມກໍານົດເວລາ ຊາວ ວັນ ນັບແຕ່ວັນສານລົງຄໍາຕັດສິນຊ້ອງໜ້າ ຫລື ວັນຄູ່ຄວາມຮັບຊາບຄໍາຕັດສິນເປັນຕົ້ນໄປ ໃນກໍລະນີທີ່ຄູ່ຄວາມບໍ່ໄດ້ມາຮ່ວມໃນວັນສານຕັດສິນຄະດີ;
9. **ຄໍາຮ້ອງຂໍອຸທອນ** ໝາຍເຖິງ ຄໍາຮ້ອງຂອງຄູ່ຄວາມ ຫລື ບຸກຄົນທີສາມ ທີ່ສະແດງເຫດຜົນໃນການຂໍອຸທອນ;
10. **ຄໍາຂໍລົບລ້າງ** ໝາຍເຖິງ ການຈອງຂໍລົບລ້າງຕາມກໍານົດເວລາ ຫົກສິບວັນ ນັບແຕ່ວັນສານລົງຄໍາພິພາກສາຊ້ອງໜ້າ ຫລື ວັນຄູ່ຄວາມຮັບຊາບຄໍາພິພາກສາເປັນຕົ້ນໄປ ໃນກໍລະນີຄູ່ຄວາມບໍ່ໄດ້ມາຮ່ວມໃນວັນສານພິພາກສາຄະດີ;
11. **ຄໍາຮ້ອງຂໍລົບລ້າງ** ໝາຍເຖິງ ຄໍາຮ້ອງຂອງຄູ່ຄວາມ ຫລື ບຸກຄົນທີສາມ ທີ່ສະແດງເຫດຜົນໃນການຂໍລົບລ້າງ;
12. **ຄໍາສະເໜີຄັດຄ້ານ** ໝາຍເຖິງ ຄໍາຂໍອຸທອນ ຫລື ຂໍລົບລ້າງ ຂອງໄອຍະການປະຊາຊົນ;
13. **ຄູ່ຄວາມໃນຄະດີ** ໝາຍເຖິງ ໂຈດ ແລະ ຈໍາເລີຍ;
    - **ໂຈດ** ໝາຍເຖິງ ບຸກຄົນ, ອົງການຈັດຕັ້ງ ຫລື ວິສາຫະກິດທີ່ຍື່ນຄໍາຮ້ອງຟ້ອງຕໍ່ສານວ່າສິດຂອງ ຕົນໄດ້ຖືກຜູ້ອື່ນລະເມີດ ຫລື ໂຕ້ແຍ່ງ;

- **ຈຳເລີຍ** ໝາຍເຖິງ ບຸກຄົນ, ອົງການຈັດຕັ້ງ ຫລື ວິສາຫະກິດທີ່ຖືກຮ້ອງຟ້ອງວ່າ ໄດ້ລະເມີດ ຫລື ໂຕ້ແຍ່ງສິດຂອງຜູ້ອື່ນ.

14. **ບຸກຄົນທີສາມ** ໝາຍເຖິງ ຜູ້ທີ່ພົວພັນໃນຄະດີ ແຕ່ບໍ່ແມ່ນໂຈດ ຫລືຈຳເລີຍ ຊຶ່ງສານຮຽກເຂົ້າມາ ຫລື ຜູ້ກ່ຽວສະເໜີເຂົ້າມາຮ່ວມໃນການດຳເນີນຄະດີ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ;

15. **ການຍຶດຊັບ** ໝາຍເຖິງ ການເອົາຊັບເຄື່ອນທີ່ຂອງຄູ່ຄວາມມາຮັກສາໄວ້ໃນການຄຸ້ມຄອງຂອງເຈົ້າໜ້າທີ່ ເພື່ອຮັບປະກັນໃນການດຳເນີນຄະດີ ແລະ ການໃຊ້ແທນຄ່າເສັຍຫາຍ;

16. **ການອາຍັດຊັບ** ໝາຍເຖິງ ການອອກຄຳສັ່ງຂອງໄອຍະການປະຊາຊົນ, ສານປະຊາຊົນ, ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກ່ຽວກັບຊັບຄົງທີ່, ຊັບເຄື່ອນທີ່ ລວມທັງ ບັນຊີເງິນຝາກ ເພື່ອບໍ່ໃຫ້ມີການຊື້, ຂາຍ, ມອບ, ແລກປ່ຽນ, ຊວດຈຳ, ຄ້ຳປະກັນ, ຕໍ່ເຕີມ, ທຳລາຍ ຫລື ປ່ຽນແປງຊັບດັ່ງກ່າວ;

17. **ການຮິບຊັບ** ໝາຍເຖິງ ການເອົາຊັບທັງໝົດ ຫລື ສ່ວນໃດສ່ວນໜຶ່ງ ທີ່ເປັນກຳມະສິດຂອງຜູ້ກະທຳຜິດ ມາເປັນຂອງລັດ ຕາມຄຳຕັດສິນຂອງສານ ໂດຍບໍ່ມີການໃຊ້ແທນ. ການຮິບຊັບ ມີຂໍ້ຫ້າມ ຕາມບັນຊີຊ້ອນທ້າຍຂອງກົດໝາຍອາຍາ;

18. **ການຮິບວັດຖຸສິ່ງຂອງ** ໝາຍເຖິງ ການເອົາຊັບ, ວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດ, ນຳໃຊ້ໃນການກະທຳຜິດ ຫລື ໄດ້ມາຈາກການກະທຳຜິດມາເປັນຂອງລັດຕາມຄຳຕັດສິນຂອງສານ;

19. **ການໂຈະ** ໝາຍເຖິງ ການຢຸດການຈັດຕັ້ງປະຕິບັດຄຳຕັດສິນຂອງສານໄວ້ຊົ່ວຄາວ ເມື່ອໝົດສາເຫດຂອງການໂຈະແລ້ວ ກໍຕ້ອງສືບຕໍ່ຈັດຕັ້ງປະຕິບັດ;

20. **ການປ່ຽນແປງ** ໝາຍເຖິງ ການປ່ຽນແປງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສ່ວນໃດສ່ວນໜຶ່ງ ຫລື ທັງໝົດ ຂອງພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ເຫັນວ່າບໍ່ຖືກຕ້ອງ, ບໍ່ສອດຄ່ອງ ກັບຄຳຕັດສິນຂອງສານ ຫລື ລະບຽບກົດໝາຍ;

21. **ການຍົກເລີກ** ໝາຍເຖິງ ການຢຸດເຊົາ ໂດຍບໍ່ໃຫ້ສືບຕໍ່ຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

22. **ການລົບລ້າງ** ໝາຍເຖິງ ການຍົກເລີກທັງໝົດການຈັດຕັ້ງປະຕິບັດຄຳຕັດສິນຂອງສານຜ່ານມາ ແຕ່ຕົ້ນຕະຫຼອດປາຍ;

23. **ການຖອນຕົວ** ໝາຍເຖິງ ການສະເໜີຂອງພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອບໍ່ເຂົ້າຮ່ວມໃນການຈັດຕັ້ງປະຕິບັດຄະດີໃດໜຶ່ງ ທີ່ເຫັນວ່າຕົນມີສ່ວນພົວພັນ;

24. **ການຄ້ານຕົວ** ໝາຍເຖິງ ການສະເໜີຂອງຄູ່ຄວາມ ຫລື ບຸກຄົນທີສາມ ກ່ຽວກັບພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ມີສ່ວນພົວພັນກັບຄະດີ ເພື່ອບໍ່ໃຫ້ເຂົ້າຮ່ວມໃນການຈັດຕັ້ງປະຕິບັດຄຳຕັດສິນຄະດີດັ່ງກ່າວ;

25. **ການປະຕິບັດພາງ** ໝາຍເຖິງ ການປະຕິບັດຄຳຕັດສິນຂອງສານຂັ້ນຕົ້ນ ຫລື ຂັ້ນອຸທອນສ່ວນໃດສ່ວນໜຶ່ງ ທີ່ເຫັນວ່າມີຄວາມຈຳເປັນຮີບດ່ວນ ກ່ອນຄຳຕັດສິນ ຫລື ຄຳພິພາກສານັ້ນ ໃຊ້ໄດ້ຢ່າງເດັດຂາດ;

26. **ການເລືອກຈັດຕັ້ງປະຕິບັດ** ໝາຍເຖິງ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໂດຍເຫັນແກ່ໝູ່ຄູ່, ພັກພວກ, ຜົນປະໂຫຍດ ເພື່ອມາປະຕິບັດກ່ອນ ຫລື ໃຫ້ຜົນປະໂຫຍດແກ່ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ;

27. **ໝາຍພາຕົວ** ໝາຍເຖິງ ຄຳສັ່ງຂອງອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອໃຫ້ເຈົ້າໜ້າທີ່ຕຳຫລວດ ນຳເອົາຕົວບຸກຄົນໃດໜຶ່ງເຂົ້າມາຫາອົງການທີ່ອອກຄຳສັ່ງດັ່ງກ່າວ ຕາມລະບຽບກົດໝາຍ.

### ມາດຕາ 4(ໃໝ່). ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ

ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແມ່ນ ຄຳຕັດສິນຂອງສານ ຊຶ່ງຄູ່ຄວາມ, ບຸກຄົນທີສາມ ບໍ່ໄດ້ຂໍອຸທອນ, ບໍ່ໄດ້ຂໍລົບລ້າງ ຫລື ໄອຍະການປະຊາຊົນ ບໍ່ໄດ້ສະເໜີຄັດຄ້ານ ຫລື ຄຳພິ ພາກສາຂອງສານປະຊາຊົນສູງສຸດ.

ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ມີຜົນບັງຄັບປະຕິບັດ.

ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດຂອງສານແຕ່ລະຂັ້ນ ມີ ດັ່ງນີ້:

1. ຄຳສັ່ງ, ຄຳຊີ້ຂາດ ແລະຄຳຕັດສິນຂັ້ນຕົ້ນຂອງສານປະຊາຊົນເມືອງ, ເທດສະບານ ຊຶ່ງຄູ່ຄວາມ, ບຸກຄົນທີສາມ ບໍ່ໄດ້ຂໍອຸທອນ ຫລື ໄອຍະການປະຊາຊົນ ບໍ່ໄດ້ສະເໜີຄັດຄ້ານ;
2. ຄຳສັ່ງ, ຄຳຊີ້ຂາດ ແລະຄຳຕັດສິນຂັ້ນຕົ້ນຂອງສານປະຊາຊົນແຂວງ, ນະຄອນ ຊຶ່ງຄູ່ຄວາມ, ບຸກຄົນທີສາມ ບໍ່ໄດ້ຂໍອຸທອນ ຫລື ໄອຍະການປະຊາຊົນບໍ່ໄດ້ສະເໜີຄັດຄ້ານ;
3. ຄຳສັ່ງ, ຄຳຊີ້ຂາດ, ຄຳພິພາກສາຂັ້ນອຸທອນຂອງສານປະຊາຊົນແຂວງ, ນະຄອນ ແລະ ຄຳພິພາກສາຂອງສານອຸທອນ ຊຶ່ງຄູ່ຄວາມ, ບຸກຄົນທີສາມ ບໍ່ໄດ້ຂໍລົບລ້າງ ຫລື ໄອຍະການປະຊາຊົນ ບໍ່ໄດ້ສະເໜີຄັດຄ້ານ;
4. ຄຳສັ່ງ, ຄຳຊີ້ຂາດ ແລະຄຳພິພາກສາຂອງສານປະຊາຊົນສູງສຸດ.

### ມາດຕາ 5(ໃໝ່). ຄຳຕັດສິນຂອງສານ ແລະນິຕິກຳອື່ນ ທີ່ນຳມາຈັດຕັ້ງປະຕິບັດ

ຄຳຕັດສິນຂອງສານ ແລະນິຕິກຳອື່ນ ທີ່ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ນຳມາຈັດຕັ້ງປະຕິບັດ ມີ ດັ່ງນີ້:

1. ຄຳສັ່ງ, ຄຳຊີ້ຂາດ ແລະຄຳຕັດສິນຄະດີແພ່ງຂັ້ນຕົ້ນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນເມືອງ, ເທດສະບານ, ສານປະຊາຊົນແຂວງ, ນະຄອນ;

2. ຄຳສັ່ງ, ຄຳຊີ້ຂາດ ແລະຄຳຕັດສິນຄະດີອາຍາຂັ້ນຕົ້ນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນເມືອງ, ເທດສະບານ, ສານປະຊາຊົນແຂວງ, ນະຄອນ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ, ໂທດປັບໃໝ, ໂທດຮິບຊັບ, ໂທດຮິບວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ;
3. ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາຄະດີແພ່ງຂັ້ນອຸທອນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນ ແຂວງ, ນະຄອນ ແລະ ສານອຸທອນ;
4. ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາຄະດີອາຍາຂັ້ນອຸທອນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນແຂວງ, ນະຄອນ ແລະ ສານອຸທອນ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ, ໂທດປັບໃໝ, ໂທດຮິບຊັບ, ໂທດຮິບວັດຖຸສິ່ງຂອງ ແລະ ໂທດດັດສ້າງ ໂດຍບໍ່ຕັດອິດສະລະພາບ;
5. ຄຳສັ່ງ, ຄຳຊີ້ຂາດ ແລະຄຳພິພາກສາຄະດີແພ່ງຂອງສານປະຊາຊົນສູງສຸດ ທີ່ບໍ່ສົ່ງຄະດີ ໃຫ້ສານຂັ້ນລຸ່ມພິຈາລະນາຄືນໃໝ່;
6. ຄຳສັ່ງ, ຄຳຊີ້ຂາດ ແລະຄຳພິພາກສາຄະດີອາຍາ ຂອງສານປະຊາຊົນສູງສຸດ ທີ່ບໍ່ສົ່ງຄະດີ ໃຫ້ສານຂັ້ນລຸ່ມພິຈາລະນາຄືນໃໝ່ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ, ໂທດປັບໃໝ, ໂທດຮິບຊັບ, ໂທດຮິບວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ;
7. ຄຳຕັດສິນ ຫລືຄຳພິພາກສາຂອງສານ ບອກວ່າໃຫ້ປະຕິບັດພາງ;
8. ຄຳສັ່ງໃຫ້ປະຕິບັດບົດບັນທຶກການໄກ່ເກັ່ຍຂອງສານ;
9. ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນຂອງສານຕ່າງປະເທດ ທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງສານປະຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຮັບຮູ້ ແລະໃຫ້ຈັດຕັ້ງປະຕິບັດ;
10. ບົດບັນທຶກການໄກ່ເກັ່ຍ ແລະ ຄຳຕັດສິນ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນ ແລະ ຕ່າງປະເທດ ຕາມສົນທິສັນຍາລະຫວ່າງປະເທດ ທີ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເຂົ້າຮ່ວມເປັນພາຄີ ຊຶ່ງໄດ້ຮັບການຢັ້ງຢືນຈາກສານປະຊາຊົນ.

**ມາດຕາ 6. ຜົນບັງຄັບປະຕິບັດຂອງຄຳຕັດສິນຂອງສານ**

ຄຳຕັດສິນຂອງສານ ແລະ ນິຕິກຳອື່ນ ທີ່ໄດ້ກຳນົດໄວ້ໃນມາດຕາ 5(ໃໝ່) ຂອງກົດໝາຍສະບັບນີ້ ມີຜົນບັງຄັບຕໍ່ບຸກຄົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຊຶ່ງຕ້ອງໄດ້ປະຕິບັດຢ່າງເຂັ້ມງວດ.

ທຸກອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະ ພົນລະເມືອງທຸກຄົນ ຕ້ອງເຄົາລົບ ພ້ອມກັນນັ້ນ ກໍມີພັນທະໃຫ້ການຮ່ວມມື, ຊ່ວຍເຫລືອອັນຈຳເປັນ ແກ່ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

**ມາດຕາ 7(ໃໝ່). ຫລັກການໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ຫລັກການໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີ ດັ່ງນີ້:

1. ຖືກຕ້ອງຕາມຄຳຕັດສິນຂອງສານ;
2. ສະເໝີພາບ;
3. ສຶກສາອົບຮົມ;
4. ເຂັ້ມງວດ, ວ່ອງໄວ ແລະຍຸຕິທຳ;
5. ປະສານສົມທົບ;
6. ໂປ່ງໃສ.

**ມາດຕາ 8(ໃໝ່). ການຖອນຕົວ ແລະການຄັດຄ້ານຕົວ**

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ເປັນຍາດພີ່ນ້ອງ, ມີຜົນປະໂຫຍດ ຫລື ມີຂໍ້ຂັດແຍ່ງກັບຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຕ້ອງຂໍຖອນຕົວອອກຈາກການຈັດຕັ້ງປະຕິບັດຄຳຕັດສິນນັ້ນ; ຖ້າຜູ້ກ່ຽວຫາກບໍ່ຖອນຕົວອອກ ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ກໍມີສິດຄັດຄ້ານຕົວຜູ້ກ່ຽວຕໍ່ຫົວໜ້າພະແນກຍຸຕິທຳແຂວງ, ນະຄອນ ໃນກໍລະນີຫາກແມ່ນພະນັກງານຂອງຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ; ຕໍ່ຫົວໜ້າຫ້ອງການຍຸຕິທຳເມືອງ, ເທດສະບານ ໃນກໍລະນີຫາກແມ່ນພະນັກງານຂອງໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອໃຫ້ຜູ້ກ່ຽວຖອນຕົວອອກຈາກການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ນັ້ນ.

## ພາກທີ II
## ອົງການຄຸ້ມຄອງ ແລະອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

### ໝວດທີ 1
### ອົງການຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

**ມາດຕາ 9. ລະບົບອົງການຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ລະບົບອົງການຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ປະກອບດ້ວຍ:
- ກະຊວງຍຸຕິທຳ;
- ພະແນກຍຸຕິທຳແຂວງ, ນະຄອນ;
- ຫ້ອງການຍຸຕິທຳເມືອງ, ເທດສະບານ.

**ມາດຕາ 10(ໃໝ່). ສິດ ແລະໜ້າທີ່ຂອງກະຊວງຍຸຕິທຳ**

ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກະຊວງຍຸຕິທຳ ໃນຖານະເປັນເສນາທິການໃຫ້ແກ່ລັດຖະບານ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ລະບຽບກົດໝາຍ ກ່ຽວກັບວຽກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລ້ວສະເໜີຕໍ່ລັດຖະບານພິຈາລະນາຮັບຮອງເອົາ;

2. ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງໃຫ້ແກ່ປະຊາຊົນ, ຊັ້ນຄົນຕ່າງໆ ເຂົ້າໃຈ ແລະ ຕື່ນຕົວປະຕິບັດ ທັງປະກອບຄຳເຫັນກ່ຽວກັບວຽກງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ດ້ວຍວິທີການຕ່າງໆ;
3. ຊີ້ນຳ, ຄຸ້ມຄອງ ແລະ ກວດກາດ້ານວິຊາການ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃນຂອບເຂດທົ່ວປະເທດ;
4. ຄົ້ນຄວ້າວິໄຈສາເຫດຂອງຄຳຕັດສິນຂອງສານທີ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ ແລ້ວສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າຊອກຫາວິທີແກ້ໄຂ;
5. ປ່ຽນແປງ, ໂຈະ, ຍົກເລີກ ຫລື ລຶບລ້າງຄຳສັ່ງຂອງຫ້ອງການ ແລະໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ບໍ່ຖືກຕ້ອງຕາມກົດໝາຍ ຫລື ສະເໜີໃຫ້ຂະແໜງການອື່ນ ລຶບລ້າງນິຕິກຳຂອງຕົນ ທີ່ບໍ່ສອດຄ່ອງກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຫລື ລະບຽບກົດໝາຍ, ພ້ອມກັນນັ້ນ ກໍໃຫ້ຄຳແນະນຳ ເພື່ອຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ຖືກຕ້ອງ;
6. ແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງຫົວໜ້າ, ຮອງຫົວໜ້າຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມການສະເໜີຂອງພະແນກຍຸຕິທຳແຂວງ, ນະຄອນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
7. ກໍ່ສ້າງ, ຍົກລະດັບ ບຸກຄະລາກອນ ທີ່ຮັບຜິດຊອບວຽກງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທາງດ້ານການເມືອງ-ແນວຄິດ, ຄຸນສົມບັດ, ຈັນຍາທຳ ແລະວິຊາສະເພາະ;
8. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
9. ພົວພັນ ຮ່ວມມື ກັບຕ່າງປະເທດ ກ່ຽວກັບການຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
10. ລາຍງານສະພາບການ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃນຂອບເຂດທົ່ວປະເທດ ໃຫ້ລັດຖະບານຊາບ ຢ່າງເປັນປົກກະຕິ;
11. ປະຕິບັດສິດ ແລະໜ້າທີ່ອື່ນກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 11(ໃໝ່). **ສິດ ແລະໜ້າທີ່ຂອງພະແນກຍຸຕິທຳແຂວງ, ນະຄອນ**

ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ພະແນກຍຸຕິທຳແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳການຈັດຕັ້ງປະຕິບັດກົດໝາຍຢ່າງຖືກຕ້ອງ ແລະເປັນເອກະພາບ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນໃນທ້ອງຖິ່ນຂອງຕົນ;
2. ຄຸ້ມຄອງທາງດ້ານການຈັດຕັ້ງ, ງົບປະມານ ແລະ ກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

3. ສະເໜີຕໍ່ກະຊວງຍຸຕິທຳ ກ່ຽວກັບການສ້າງຕັ້ງ ແລະ ປັບປຸງຫ້ອງການ, ການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າ ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໂດຍໄດ້ຮັບການເຫັນດີຈາກອົງການປົກຄອງ ແຂວງ, ນະຄອນ;
4. ສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນ ກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳ ແໜ່ງ ຫົວໜ້າ, ຮອງຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມການສະເໜີຂອງຫ້ອງການຍຸຕິທຳ ເມືອງ, ເທດສະບານ;
5. ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງໃຫ້ແກ່ປະຊາຊົນ, ຊັ້ນຄົນຕ່າງໆ ເຂົ້າໃຈ ແລະ ຕື່ນຕົວປະຕິບັດ ທັງປະກອບຄຳເຫັນກ່ຽວກັບວຽກງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ດ້ວຍວິທີການຕ່າງໆ;
6. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
7. ພົວພັນຮ່ວມມືກັບຕ່າງປະເທດກ່ຽວກັບການຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນ ຂອງສານ ຕາມການມອບໝາຍຂອງກະຊວງຍຸຕິທຳ;
8. ຄຸ້ມຄອງລາຍຮັບ-ລາຍຈ່າຍ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
9. ລາຍງານກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ກະຊວງຍຸຕິທຳ ແລະ ອົງການປົກຄອງແຂວງ, ນະຄອນ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 12(ໃໝ່). **ສິດ ແລະໜ້າທີ່ຂອງຫ້ອງການຍຸຕິທຳເມືອງ, ເທດສະບານ**

ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຫ້ອງການຍຸຕິທຳເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງທາງດ້ານການຈັດຕັ້ງ, ງົບປະມານ ແລະ ກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
2. ສະເໜີຕໍ່ພະແນກຍຸຕິທຳແຂວງ, ນະຄອນ ເພື່ອໃຫ້ນຳສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນ ກ່ຽວກັບການສ້າງຕັ້ງ ແລະ ປັບປຸງໜ່ວຍງານ, ການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໂດຍໄດ້ຮັບການເຫັນດີ ຈາກອົງການປົກຄອງ ເມືອງ, ເທດສະບານ;
3. ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງໃຫ້ແກ່ປະຊາຊົນ, ຊັ້ນ

ຄົນຕ່າງໆ ເຂົ້າໃຈ ແລະ ຕື່ນຕົວປະຕິບັດ ທັງປະກອບຄຳເຫັນກ່ຽວ ກັບວຽກງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ດ້ວຍວິທີການຕ່າງໆ;

4. ຍົກລະດັບບຸກຄະລາກອນ ທີ່ຮັບຜິດຊອບວຽກງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທາງດ້ານການເມືອງ-ແນວຄິດ, ຄຸນສົມບັດ, ຈັນຍາທຳ, ຄວາມຮູ້ ແລະ ຄວາມສາມາດ;
5. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
6. ຄຸ້ມຄອງລາຍຮັບ-ລາຍຈ່າຍ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
7. ລາຍງານກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ພະແນກຍຸຕິທຳ ແລະ ອົງການປົກຄອງ ເມືອງ, ເທດສະບານ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ມາດຕາ 13. **ລະບົບອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ລະບົບອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ປະກອບດ້ວຍ:

- ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
- ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

ມາດຕາ 14. **ທີ່ຕັ້ງ ແລະພາລະບົດບາດຂອງຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນ ການຈັດຕັ້ງໜຶ່ງຂອງພະແນກຍຸຕິທຳແຂວງ, ນະຄອນ ມີພາລະບົດບາດຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ນິຕິກຳອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5(ໃໝ່) ຂອງກົດໝາຍສະບັບນີ້ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

ມາດຕາ 15(ໃໝ່). **ໂຄງປະກອບບຸກຄະລາກອນ**

ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ປະກອບດ້ວຍ:

- ຫົວໜ້າ;
- ຮອງຫົວໜ້າ;
- ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ວິຊາການ ແລະ ພະນັກງານບໍລິຫານຈຳນວນໜຶ່ງ.

ຫົວໜ້າຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນ ຮອງຫົວໜ້າພະແນກຍຸຕິທຳ ແຂວງ, ນະຄອນ ໂດຍຕຳແໜ່ງ.

ມາດຕາ 16(ໃໝ່). **ສິດ ແລະ ໜ້າທີ່ຂອງຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານມີ ສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະນິຕິກຳອື່ນ ເພື່ອກະກຽມຈັດຕັ້ງປະຕິບັດ; ທວງເອົາຂອງກາງຄະດີ ລວມທັງບົດບັນທຶກການຍຶດ, ການອາຍັດຂອງ ກາງຄະດີດັ່ງກ່າວທີ່ຄ້າງຄາຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳມາຈັດຕັ້ງປະຕິບັດ;
2. ສະເໜີໃຫ້ສານທີ່ໄດ້ລົງຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ອະທິບາຍຢ່າງເປັນລາຍລັກອັກສອນ ກ່ຽວກັບບັນຫາໃດບັນຫາໜຶ່ງ ທີ່ຍັງບໍ່ທັນຈະແຈ້ງ;
3. ສະເໜີຕໍ່ເຈົ້າໜ້າທີ່ຕຳຫລວດມີມາດຕະການຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານທີ່ມີເຈດຕະນາຫລົບຫລີກການປະຕິບັດຄຳຕັດສິນຂອງສານ ໂດຍສະເພາະ ການອອກນອກປະເທດ;
4. ອອກໝາຍຮຽກຄູ່ຄວາມ ເພື່ອຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
5. ອອກຄຳສັ່ງອາຍັດ, ຄຳສັ່ງຍຶດຊັບ, ຄຳສັ່ງຍົກຍ້າຍ, ຄຳສັ່ງໃຫ້ພາຕົວ, ຄຳສັ່ງປັບໃໝ ແລະ ຄຳສັ່ງອື່ນ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
7. ສະເໜີຂໍຄຳເຫັນນຳຂັ້ນເທິງຂອງຕົນ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ຫຍຸ້ງຍາກສັບສົນ;
8. ຊີ້ນຳທາງດ້ານວິຊາການ ແລະ ກວດກາການຈັດຕັ້ງປະຕິບັດວຽກງານ ຂອງໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
9. ປ່ຽນແປງ, ໂຈະ, ຍົກເລີກ ຫລື ລົບລ້າງຄຳສັ່ງຂອງໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ບໍ່ຖືກຕ້ອງຕາມກົດໝາຍ ຫລື ສະເໜີໃຫ້ລົບລ້າງນິຕິກຳຂອງຂະແໜງການອື່ນ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ຂັດກັບຄຳຕັດສິນຂອງສານ ຫລື ລະບຽບກົດໝາຍ, ພ້ອມກັນນັ້ນ ກໍຕ້ອງໃຫ້ຄຳແນະນຳ ເພື່ອຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ຖືກຕ້ອງ;
10. ລາຍງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ໄອຍະການປະຊາຊົນຂັ້ນຂອງຕົນ ຢ່າງເປັນປົກກະຕິ ຫລື ຕາມການສະເໜີ;
11. ລາຍງານກ່ຽວກັບການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ພະແນກຍຸຕິທຳແຂວງ, ນະຄອນ ແລະກະຊວງຍຸຕິທຳ ຢ່າງເປັນປົກກະຕິ ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 17(ໃໝ່). **ທີ່ຕັ້ງ ແລະພາລະບົດບາດຂອງໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຊຶ່ງສ້າງຕັ້ງຂຶ້ນຢູ່ແຕ່ລະເມືອງ, ເທດສະບານ ແມ່ນ ການຈັດຕັ້ງໜຶ່ງຂອງຫ້ອງການຍຸຕິທຳເມືອງ, ເທດສະບານ ມີພາລະບົດບາດຈັດຕັ້ງປະຕິ

ບັດຄຳຕັດສິນຂອງສານ ແລະນິຕິກຳອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5(ໃໝ່) ຂອງກົດໝາຍສະບັບນີ້ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 18(ໃໝ່). ໂຄງປະກອບບຸກຄະລາກອນ**

ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ປະກອບດ້ວຍ:

- ຫົວໜ້າ
- ຮອງຫົວໜ້າ;
- ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ວິຊາການ ແລະ ພະນັກງານບໍລິຫານຈຳນວນໜຶ່ງ.

ຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນ ຮອງຫົວໜ້າຫ້ອງການຍຸຕິທຳ ເມືອງ, ເທດສະບານ ໂດຍຕຳແໜ່ງ.

**ມາດຕາ 19(ໃໝ່). ສິດ ແລະ ໜ້າທີ່ຂອງໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນ ເພື່ອກະກຽມຈັດຕັ້ງປະຕິບັດ; ທວງເອົາຂອງກາງທີ່ມີຢູ່ໃນຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໃນກໍລະນີທີ່ຍັງບໍ່ທັນໄດ້ຮັບ;
2. ສະເໜີໃຫ້ສານທີ່ໄດ້ລົງຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ອະທິບາຍຢ່າງເປັນລາຍລັກອັກສອນ ກ່ຽວກັບບັນຫາໃດບັນຫາໜຶ່ງ ທີ່ຍັງບໍ່ທັນຈະແຈ້ງ;
3. ສະເໜີຕໍ່ເຈົ້າໜ້າທີ່ຕຳຫລວດ ມີມາດຕະການ ຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີເຈດຕະນາຫລົບຫລີກການປະຕິບັດຄຳຕັດສິນຂອງສານ ໂດຍສະເພາະການອອກນອກປະເທດ;
4. ອອກໝາຍຮຽກຄູ່ຄວາມ ເພື່ອຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
5. ອອກຄຳສັ່ງອາຍັດ, ຄຳສັ່ງຍຶດຊັບ, ຄຳສັ່ງຍົກຍ້າຍ, ຄຳສັ່ງໃຫ້ພາຕົວ, ຄຳສັ່ງປັບໃໝ ແລະຄຳສັ່ງອື່ນ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ໜ່ວຍໄກ່ເກ່ຍຂັ້ນບ້ານ ເພື່ອຊ່ວຍໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
7. ສະເໜີຂໍຄຳເຫັນນຳຂັ້ນເທິງຂອງຕົນ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ຫຍຸ້ງຍາກສັບສົນ;
8. ລາຍງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ໄອຍະການປະຊາຊົນຂັ້ນຂອງຕົນ ຢ່າງເປັນປົກກະຕິ ຫລື ຕາມການສະເໜີ;
9. ລາຍງານກ່ຽວກັບການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ ໃຫ້ຫ້ອງການຍຸຕິທຳ ເມືອງ, ເທດສະບານ ແລະ ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານຢ່າງເປັນປົກກະຕິ;

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 20. ສິດ ແລະ ໜ້າທີ່ຂອງຫົວໜ້າ, ຮອງຫົວໜ້າ ຫ້ອງການ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ຫົວໜ້າຫ້ອງການ ແລະ ຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີສິດ ແລະ ໜ້າທີ່ໃນການຊີ້ນຳ, ນຳພາ ແລະ ກວດກາການເຄື່ອນໄຫວວຽກງານຂອງຫ້ອງການ ຫລື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ. ພ້ອມກັນນັ້ນ ກໍມີໜ້າທີ່ຮັບຜິດຊອບຕໍ່ພະແນກຍຸຕິທຳ ແຂວງ, ນະຄອນ ຫລື ຫ້ອງການຍຸຕິທຳເມືອງ, ເທດສະບານ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16(ໃໝ່) ແລະ ມາດຕາ 19(ໃໝ່) ຂອງກົດໝາຍສະບັບນີ້.

ຮອງຫົວໜ້າຫ້ອງການ ແລະຮອງຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເປັນຜູ້ຊ່ວຍວຽກຫົວໜ້າ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າ. ໃນກໍລະນີຫົວໜ້າຕິດຂັດ ຍ້ອນເຫດຜົນໃດໜຶ່ງ ຮອງຫົວໜ້າຜູ້ທີ່ໄດ້ຮັບມອບໝາຍ ນັ້ນ ເປັນຜູ້ວ່າການແທນ.

**ມາດຕາ 21(ໃໝ່). ສິດ ແລະ ໜ້າທີ່ຂອງພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນ ເພື່ອກະກຽມຈັດຕັ້ງປະຕິບັດ. ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມເນື້ອໃນຄຳຕັດສິນຂອງສານ, ຕາມ ລະບຽບການ ແລະ ຂັ້ນຕອນຂອງກົດໝາຍສະບັບນີ້;
2. ສະເໜີຫົວໜ້າຫ້ອງການ ຫລື ຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອໃຫ້ສານທີ່ໄດ້ລົງຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ອະທິບາຍຢ່າງເປັນລາຍລັກອັກສອນ ກ່ຽວກັບບັນຫາໃດບັນຫາໜຶ່ງ ທີ່ຍັງບໍ່ທັນຈະແຈ້ງ;
3. ອອກໝາຍຮຽກຄູ່ຄວາມ ເພື່ອແຈ້ງເນື້ອໃນຄຳຕັດສິນຂອງສານໃຫ້ຊາບ ພ້ອມທັງແນະນຳ, ສຶກສາອົບຮົມ ແລະ ຊຸກຍູ້ໃຫ້ປະຕິບັດ;
4. ເກັບກຳຂໍ້ມູນ ກ່ຽວກັບຊັບສິນ ແລະ ເງື່ອນໄຂຕ່າງໆ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ເພື່ອຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
6. ສະເໜີໃຫ້ຫົວໜ້າຫ້ອງການ ຫລື ຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງອາຍັດ, ຄຳສັ່ງຍຶດຊັບ, ຄຳສັ່ງຍົກຍ້າຍ, ຄຳສັ່ງໃຫ້ພາຕົວ, ຄຳສັ່ງປັບໃໝ ຫລື ສະເໜີຕໍ່ເຈົ້າໜ້າທີ່ຕຳຫລວດ ມີມາດຕະການຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີເຈດຕະນາຫລົບຫລີກການປະຕິບັດຄຳຕັດສິນຂອງສານນັ້ນ ບໍ່ໃຫ້ອອກນອກປະເທດ ແລະ ຄຳສັ່ງອື່ນ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

7. ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ຕົນໄດ້ຮັບມອບໝາຍໃຫ້ຈັດຕັ້ງປະຕິບັດນັ້ນ ຕໍ່ຫົວໜ້າຫ້ອງການ ຫລື ຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 22(ໃໝ່). ມາດຕະຖານ ແລະ ເງື່ອນໄຂຂອງພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ເປັນພົນລະເມືອງລາວ ທີ່ມີອາຍຸແຕ່ 25 ປີ ຂຶ້ນໄປ;
2. ມີທັດສະນະຫລັກໝັ້ນຊຶນຊັ້ນ ແລະມີຄວາມໜັກແໜ້ນທາງດ້ານການເມືອງ;
3. ມີຄຸນສົມບັດ ຈັນຍາບັນ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ມີຄວາມສັດຊື່ບໍລິສຸດຕໍ່ປະເທດຊາດ, ຕໍ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ຂອງພົນລະເມືອງ, ມີມະນຸດສຳ ພັນດີ;
4. ມີຄວາມຮູ້, ມີນ້ຳໃຈກ້າຫານ, ອົດທົນ, ມີຄວາມສາມາດຊວນເຊື່ອໃຫ້ຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
5. ຈົບການສຶກສາວິຊາກົດໝາຍຊັ້ນກາງຂຶ້ນໄປ ຫລືໄດ້ຮັບການບຳລຸງວິຊາກົດໝາຍ ແລະໄດ້ຮັບການຝຶກອົບຮົມ ກ່ຽວກັບວຽກງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
6. ມີປະສົບການ ກ່ຽວກັບວຽກງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຢ່າງໜ້ອຍ ສອງ ປີ;
7. ມີສຸຂະພາບສົມບູນດີ.

ສຳລັບ ພະນັກງານ ຜູ້ທີ່ຈະເປັນຫົວໜ້າຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ນອກຈາກມີມາດຕະຖານ, ເງື່ອນໄຂ ດັ່ງທີ່ໄດ້ກ່າວມາຂ້າງເທິງນີ້ແລ້ວ ຍັງຕ້ອງເປັນຜູ້ທີ່ມີແບບແຜນວິທີເຮັດວຽກດີ, ມີປະສົບການກ່ຽວກັບວຽກງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຢ່າງໜ້ອຍ ຫ້າປີ ແລະ ມີລະດັບວິຊາສະເພາະກົດໝາຍຊັ້ນສູງຂຶ້ນໄປ; ສ່ວນຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງມີປະສົບການຢ່າງໜ້ອຍ ສາມປີ ແລະ ມີລະດັບວິຊາສະເພາະ ກົດໝາຍຊັ້ນກາງຂຶ້ນໄປ.

## ພາກທີ III
## ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

### ໝວດທີ 1
### ຂັ້ນຕອນໃນການຈັດຕັ້ງປະຕິບັດຄຳຕັດສິນຄະດີແພ່ງ

**ມາດຕາ 23(ໃໝ່). ການສົ່ງຄຳຕັດສິນໃຫ້ຈັດຕັ້ງປະຕິບັດ**

ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດ ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຢ່າງຊ້າບໍ່ໃຫ້ເກີນ ສາມສິບ ວັນ ນັບແຕ່ວັນຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ໃຊ້ໄດ້ຢ່າງເດັດຂາດ ຫລື ວັນຄູ່ຄວາມຮັບຊາບ ເປັນຕົ້ນໄປ.

ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ຕ້ອງສົ່ງໃຫ້ໄອຍະການປະຊາຊົນ ເພື່ອຕິດຕາມການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນ.

**ມາດຕາ 24(ໃໝ່). ບ່ອນຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ບ່ອນຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີ ດັ່ງນີ້:

- ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສຳລັບຄຳຕັດສິນຂອງສານປະຊາຊົນແຂວງ, ນະຄອນ ທີ່ຕັດສິນເປັນຂັ້ນຕົ້ນ;
- ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສຳລັບຄຳຕັດສິນຂອງສານປະຊາຊົນເມືອງ, ເທດສະບານ ແລະຄຳພິພາກສາຂອງສານປະຊາຊົນແຂວງ, ນະຄອນ ເປັນຂັ້ນອຸ ທອນ.

ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສາມາດຈັດຕັ້ງປະຕິບັດຄຳຕັດສິນຂອງສານຂອງສານປະຊາຊົນ ເມືອງ, ເທດສະບານ ໃນກໍລະນີທີ່ບໍ່ມີໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຫລື ຕາມການສະເໜີຂອງໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

**ມາດຕາ 25. ຂັ້ນຕອນໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີສີ່ຂັ້ນຕອນ ດັ່ງນີ້:

1. ຄົ້ນຄວ້າຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນ ເພື່ອກະກຽມຈັດຕັ້ງປະຕິບັດ;
2. ຮຽກຄູ່ຄວາມເຂົ້າມາ ເພື່ອແຈ້ງເນື້ອໃນຄຳຕັດສິນຂອງສານໃຫ້ຊາບ ພ້ອມທັງ ແນະນຳ ແລະ ປຸກລະດົມໃຫ້ປະຕິບັດ;
3. ຈັດຕັ້ງປະຕິບັດຄຳຕັດສິນຂອງສານຕົວຈິງ;
4. ສິ້ນສຸດການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

**ມາດຕາ 26. ການຄົ້ນຄວ້າຄຳຕັດສິນຂອງສານ ແລະນິຕິກຳອື່ນ**

ພາຍຫລັງໄດ້ຮັບຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນແລ້ວ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງຄົ້ນຄວ້າຄຳຕັດສິນ ຫລື ນິຕິກຳນັ້ນໃຫ້ລະອຽດ, ເຂົ້າໃຈ ພ້ອມກັນນັ້ນ ກໍກະກຽມເງື່ອນໄຂຕ່າງໆ ເພື່ອຈັດຕັ້ງປະຕິບັດ.

**ມາດຕາ 27(ໃໝ່). ການຮຽກຄູ່ຄວາມ**

ພາຍໃນກຳນົດ ສິບວັນ ນັບແຕ່ວັນໄດ້ຮັບຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດເປັນຕົ້ນໄປ ແລະ ໄດ້ກະກຽມເງື່ອນໄຂຕ່າງໆ ເພື່ອຈັດຕັ້ງປະຕິບັດແລ້ວ ພະນັກງານຈັດຕັ້ງປະຕິ

ບັດຄຳຕັດສິນຂອງສານ ຕ້ອງຮຽກເອົາຄູ່ຄວາມໃນຄະດີເຂົ້າມາຫ້ອງການ ຫລື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອແຈ້ງກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ຊາບ, ພ້ອມກັນນັ້ນ ກໍແນະນຳ, ຊຸກຍູ້ ໃຫ້ປະຕິບັດພາຍໃນກຳນົດເວລາຫົກສິບວັນ.

ໃນກຳນົດເວລາດັ່ງກ່າວ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງຕິດຕາມການປະຕິບັດຄຳຕັດສິນຂອງສານ ຂອງຜູ້ຖືກປະຕິບັດ, ຖ້າຫາກເຫັນວ່າມີຄວາມຈຳເປັນ ເຊັ່ນ: ຜູ້ຖືກປະຕິບັດຄຳຕັດສິນຂອງສານ ມີເຈດຕະນາຫລົບຫລີກບໍ່ຢາກປະຕິບັດຄຳຕັດສິນນັ້ນ ກໍສາມາດຂຶ້ນບັນຊີຊັບສິນຂອງຜູ້ກ່ຽວ ທີ່ສານຍັງບໍ່ທັນໄດ້ອອກຄຳສັ່ງອາຍັດຊັບ ຫລື ຍຶດຊັບ ແລ້ວສະເໜີໃຫ້ຫົວໜ້າຫ້ອງການ ຫລື ຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງອາຍັດ ຫລື ຍຶດຊັບ ກໍໄດ້.

**ມາດຕາ 28(ໃໝ່). ການຈັດຕັ້ງປະຕິບັດຕົວຈິງ**

ພາຍໃນຫົກສິບວັນ ຖ້າຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກໄດ້ປະຕິບັດຕາມຄຳຕັດສິນຂອງສານຢ່າງຄົບຖ້ວນແລ້ວ ກໍຖືວ່າການຈັດຕັ້ງປະຕິບັດຄຳຕັດສິນຂອງສານນັ້ນ ໄດ້ສິ້ນສຸດລົງ. ຖ້າວ່າພາຍໃນກຳນົດດັ່ງກ່າວ ຄຳຕັດສິນຂອງສານຫາກບໍ່ໄດ້ຮັບການປະຕິບັດ ຫລື ປະຕິບັດແຕ່ຫາກຍັງບໍ່ທັນໄດ້ຄົບຖ້ວນ ຫ້ອງການ ຫລື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງກວດກາ, ຂຶ້ນບັນຊີຊັບສິນ, ອອກຄຳສັ່ງອາຍັດຊັບ ຫລື ຍຶດຊັບ ຖ້າວ່າມາດຕະການດັ່ງກ່າວ ຫາກຍັງບໍ່ທັນໄດ້ນຳໃຊ້ມາກ່ອນ. ພ້ອມກັນນັ້ນ ກໍອາດຈະອອກຄຳສັ່ງຍົກຍ້າຍ, ຄຳສັ່ງປັບໃໝຜູ້ຖືກປະຕິບັດຄຳຕັດສິນຂອງສານນັ້ນ ແລ້ວແຕ່ລະກໍລະນີ.

ໃນເວລາກວດກາຊັບ, ອາຍັດຊັບ ຫຼື ຍຶດຊັບ ແລະ ຍົກຍ້າຍຜູ້ຖືກປະຕິບັດຄຳຕັດສິນຂອງສານ ຕ້ອງປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ. ສ່ວນການຍຶດຊັບນັ້ນ ຕ້ອງໃຫ້ຜູ່ຄຸ້ມຄອງຊັບໃນເວລາຍຶດ ເຂົ້າຮ່ວມນຳ, ໃນກໍລະນີທີ່ ຜູ່ຄຸ້ມຄອງຊັບ ຫາກບໍ່ແມ່ນເຈົ້າຂອງຊັບ ພາຍຫຼັງຍຶດແລ້ວ ຕ້ອງແຈ້ງໃຫ້ເຈົ້າຂອງຊັບຊາບໃນທັນໃດ. ຊັບທີ່ຍຶດ ຫລື ອາຍັດນັ້ນ ຕ້ອງຕີລາຄາ ແລະ ປະກາດຂາຍ ເພື່ອໃຊ້ແທນໜີ້ສິນ. ກ່ອນການປະກາດຂາຍ ຕ້ອງຈັດຕັ້ງຄະນະກຳມະການຕີລາຄາ ໂດຍແມ່ນເຈົ້າແຂວງ, ເຈົ້າຄອງນະຄອນ ຫລື ເຈົ້າເມືອງ, ຫົວໜ້າເທດສະບານ ເປັນຜູ້ແຕ່ງຕັ້ງໄວ້ ເພື່ອຕີລາຄາຊັບສິນທີ່ໄດ້ອາຍັດ ຫລື ຍຶດທີ່ມີມູນຄ່າສູງ ໃນຄະດີຕ່າງໆ ທີ່ເກີດຂຶ້ນ; ພາຍຫຼັງທີ່ໄດ້ຕີລາຄາແລ້ວ ຈຶ່ງປະກາດຂາຍຊັບສິນດັ່ງກ່າວ ໃຫ້ມວນຊົນຊາບຢ່າງກວ້າງຂວາງ ເພື່ອປະມູນຂາຍຕາມລະບຽບການ.

ໃນກໍລະນີທີ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກຍົກຍ້າຍໄປຢູ່ບ່ອນອື່ນ ກ່ອນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຫລື ການປະຕິບັດຍັງບໍ່ທັນສິ້ນສຸດນັ້ນ ຫ້ອງການ ຫລື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ມີສິດໂອນການຈັດຕັ້ງປະຕິບັດຄຳຕັດສິນດັ່ງກ່າວ ໄປໃຫ້ຫ້ອງການ ຫລື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ບ່ອນຜູ້ຖືກປະຕິບັດຄຳຕັດສິນຂອງສານ ຍ້າຍໄປຢູ່ນັ້ນ ເປັນຜູ້ຈັດຕັ້ງປະຕິບັດແທນ.

ຖ້າວ່າຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກມີຊັບຢູ່ຫລາຍເມືອງ ຫລື ຢູ່ຫລາຍແຂວງ ຫ້ອງການ ຫລື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ຮັບຜິດຊອບຈັດຕັ້ງປະຕິບັດຄຳຕັດສິນດັ່ງກ່າວ ຈະສະເໜີໃຫ້ຫ້ອງການ ຫລື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ບ່ອນມີຊັບຢູ່ນັ້ນ ຈັດຕັ້ງປະຕິບັດແທນຕົນກໍໄດ້ ຈົນກວ່າຈະຄົບຈໍານວນໜີ້ສິນ ຕາມຄໍາຕັດສິນຂອງສານ.

**ມາດຕາ 29(ໃໝ່). ການສິ້ນສຸດການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ**

ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

1. ຜູ້ຖືກປະຕິບັດໄດ້ປະຕິບັດຕາມຄໍາຕັດສິນຂອງສານຢ່າງຄົບຖ້ວນແລ້ວ;
2. ເຈົ້າໜີ້ໄດ້ສະລະສິດ. ໃນກໍລະນີທີ່ເຈົ້າໜີ້ໄດ້ຮັບໝາຍຮຽກສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາສະເໜີຕົວ ຕໍ່ພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ໂດຍບໍ່ມີເຫດຜົນພຽງພໍ ກໍໃຫ້ຖືວ່າເປັນການສະລະສິດເຊັ່ນດຽວກັນ;
3. ຜູ້ຖືກປະຕິບັດໄດ້ເສຍຊີວິດ ໂດຍບໍ່ມີຊັບ, ບໍ່ມີສິດ ຫລື ບໍ່ມີພັນທະໃຫ້ຜູ້ອື່ນສືບທອດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;
4. ຄໍາຕັດສິນ ຫລື ຄໍາພິພາກສາຂອງສານໄດ້ຖືກປ່ຽນແປງ, ຍົກເລີກ ຫລື ລົບລ້າງ ໂດຍບໍ່ໃຫ້ຄູ່ຄວາມມີພັນທະປະຕິບັດ.

ເມື່ອການຈັດຕັ້ງປະຕິບັດຄໍາຕັດສິນຂອງສານໄດ້ສິ້ນສຸດແລ້ວ ພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ຕ້ອງສະເໜີໃຫ້ຫົວໜ້າຫ້ອງການ ຫລື ຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ເພື່ອອອກຄໍາສັ່ງປິດສໍານວນຄະດີ ແລະ ແຈ້ງໃຫ້ຄູ່ຄວາມ, ໄອຍະການປະຊາຊົນ, ຫ້ອງວ່າການຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ ແລະ ອົງການປົກຄອງທ້ອງຖິ່ນ ຊາບ.

## ໝວດທີ 2
## ມາດຕະການໃນການຈັດຕັ້ງປະຕິບັດຄໍາຕັດສິນຄະດີແພ່ງ

**ມາດຕາ 30. ການອອກຄໍາສັ່ງຂອງອົງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ**

ເພື່ອຮັບປະກັນໃຫ້ຄໍາຕັດສິນຂອງສານ ໄດ້ຮັບການປະຕິບັດຢ່າງສໍາເລັດຜົນນັ້ນ ຫ້ອງການ ຫລື ໜ່ວຍງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ຈະອອກຄໍາສັ່ງໃຫ້ພາຕົວ, ຄໍາສັ່ງຍຶດ ຫລື ອາຍັດຊັບ, ຍົກຍ້າຍ, ປັບໃໝ ແລະ ຄໍາສັ່ງອື່ນ ທີ່ເຫັນວ່າຈໍາເປັນ ແຕ່ບໍ່ໃຫ້ອອກຄໍາສັ່ງກັກຕົວ ຫລື ກັກຂັງເພື່ອເລັ່ງໜີ້.

ໃນກໍລະນີ ຊັບສິ່ງຂອງທີ່ຖືກອາຍັດ ຫລື ຍຶດນັ້ນ ຫາກມີຄວາມຈໍາເປັນ ຕ້ອງມີການຄຸ້ມຄອງ ຫລື ແກ້ໄຂຢ່າງຮີບດ່ວນ ເນື່ອງຈາກວ່າຊັບສິ່ງຂອງດັ່ງກ່າວຈະມີການປ່ຽນຮູບ ຫລື ເສຍຄຸນນະພາບ, ຫ້ອງການ ຫລື ໜ່ວຍງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ຕ້ອງຄຸ້ມຄອງ, ປົກປັກຮັກສາ ຫລື ຂາຍເອົາເງິນມາໄວ້ ເພື່ອປະຕິບັດຄໍາຕັດສິນຂອງສານໃນຂັ້ນຕໍ່ໄປ.

ໃນການຈັດຕັ້ງປະຕິບັດຄໍາຕັດສິນຂອງສານກ່ຽວກັບການມອບ ຫລື ການສົ່ງຊັບຄືນທີ່ດິນນັ້ນ ຫ້ອງການ ຫລື ໜ່ວຍງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ຕ້ອງອອກຄໍາສັ່ງໃຫ້ຜູ້ຄອບຄອງຊັບດັ່ງກ່າວ ຍົກຍ້າຍອອກຈາກສະຖານທີ່ ຫລື ທີ່ພັກອາໄສ ທີ່ຕ້ອງໄດ້ມອບ ຫລື ສົ່ງພາຍໃນກໍານົດເວລາບໍ່ໃຫ້ເກີນເກົ້າສິບວັນ ນັບແຕ່ວັນໄດ້ຮັບຄໍາສັ່ງເປັນຕົ້ນໄປ.

ມາດຕະການທີ່ໄດ້ກຳນົດໄວ້ໃນວັກທີ 3 ຂອງມາດຕານີ້ ກໍສາມາດນຳໃຊ້ຕໍ່ຫລັກຊັບຄ້ຳປະກັນຂອງຂໍ້ຜູກພັນໃນສັນຍາ ເຊັ່ນດຽວກັນ.

**ມາດຕາ 31. ຜົນບັງຄັບປະຕິບັດຂອງຄຳສັ່ງຂອງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ຄຳສັ່ງຂອງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ອອກຢ່າງຖືກຕ້ອງໃນຂອບເຂດສິດ ແລະໜ້າທີ່ຂອງຕົນ ເພື່ອຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ນິຕິກຳອື່ນ ທີ່ໄດ້ກຳນົດໄວ້ໃນມາດຕາ 5(ໃໝ່) ຂອງກົດໝາຍສະບັບນີ້ ໃຫ້ຖືຄືກັນກັບຄຳສັ່ງຂອງສານ ແລະ ມີຜົນບັງຄັບປະຕິບັດ ສຳລັບບຸກຄົນ ແລະ ອົງການຈັດຕັ້ງ ດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງກົດໝາຍສະບັບນີ້.

ການຫລີກລ້ຽງບໍ່ຍອມປະຕິບັດຄຳສັ່ງດັ່ງກ່າວ ໂດຍເຈດຕະນາ ຫລື ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຫລື ບຸກຄົນອື່ນ ທີ່ເຂົ້າຮ່ວມໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ດ້ວຍການນາບຂູ່, ໃຊ້ຄວາມຮຸນແຮງ ຫລື ດ້ວຍຮູບການອື່ນ ຖືວ່າເປັນການກະທຳຜິດທາງອາຍາ ແລະ ຈະຖືກລົງໂທດຕາມມາດຕາ 158, 173 ແລະ ມາດຕາອື່ນຂອງກົດໝາຍອາຍາ.

**ມາດຕາ 32. ຊັບທີ່ຫ້າມອາຍັດ ຫລື ຍຶດ**

ຊັບສິ່ງຂອງທີ່ຈະບໍ່ຖືກອາຍັດ ຫລື ຍຶດມາໃຊ້ແທນໜີ້ສິນ ມີ ດັ່ງນີ້:

1. ສິ່ງສັກກາລະບູຊາຂອງລູກໜີ້;
2. ອາຫານສຳລັບກິນປະຈຳວັນ ແລະຢາປົວພະຍາດຂອງລູກໜີ້;
3. ວັດຖຸສິ່ງຂອງທີ່ໃຊ້ເປັນປະຈຳຂອງລູກໜີ້ ແລະ ຂອງບຸກຄົນ ຊຶ່ງຢູ່ພາຍໃຕ້ການດູແລລ້ຽງດູຂອງລູກໜີ້ ເຊັ່ນ: ເຄື່ອງນຸ່ງຫົ່ມ, ເຄື່ອງນອນ, ເຄື່ອງຄົວກິນ ແລະ ເຄື່ອງຫລິ້ນເດັກນ້ອຍ;
4. ວັດຖຸສິ່ງຂອງທີ່ຈຳເປັນ ສຳລັບການປະກອບອາຊີບຂະໜາດນ້ອຍຂອງລູກໜີ້.

**ມາດຕາ 33. ມາດຕະການຕໍ່ຜູ້ບໍ່ຍອມປະຕິບັດຄຳຕັດສິນຂອງສານ**

ພາຍຫລັງຫ້ອງການ ຫລື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໄດ້ອອກຄຳສັ່ງອາຍັດຊັບ, ຍຶດຊັບ ຫລື ອອກຄຳສັ່ງຍົກຍ້າຍແລ້ວ ແຕ່ລູກໜີ້ບໍ່ຍອມປະຕິບັດຕາມຄຳຕັດສິນຂອງສານທັງໆທີ່ມີຄວາມສາມາດໃຊ້ແທນໄດ້ ແຕ່ມີເຈດຕະນາບໍ່ປະຕິບັດ ຊຶ່ງແກ່ຍາວກາຍກຳນົດຫົກສິບວັນນັ້ນ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຈະປັບໃໝໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າທີ່ຍັງບໍ່ທັນໄດ້ໃຊ້ແທນ, ຖ້າຫາກກາຍກຳນົດເກົ້າສິບວັນ ຈະປັບໃໝສາມສ່ວນຮ້ອຍ (3%) ຂອງມູນຄ່າທີ່ຍັງບໍ່ທັນໄດ້ໃຊ້ແທນ ນັບແຕ່ມື້ໄດ້ແຈ້ງໃຫ້ປະຕິບັດຄຳຕັດສິນຂອງສານ ເປັນຕົ້ນໄປ.

ໃນກໍລະນີທີ່ບໍ່ແມ່ນໜີ້ສິນ ສຳລັບຊັບສິ່ງຂອງທີ່ສາມາດຕີມູນຄ່າໄດ້ ເຊັ່ນ: ການທວງໃຫ້ອອກຈາກທີ່ດິນ, ເຮືອນ, ການແບ່ງປັນມູນມໍລະດົກ, ສິນສົມສ້າງ, ຄ່າລ້ຽງດູ, ຖ້າວ່າຊັບສິ່ງຂອງນັ້ນຫາກມີມູນຄ່າຕ່ຳກວ່າ ຫ້າຮ້ອຍລ້ານກີບ ຈະປັບໃໝຄັ້ງທີໜຶ່ງ ຫ້າແສນກີບ, ຄັ້ງທີສອງ ສອງລ້ານກີບ; ສຳລັບຊັບສິ່ງຂອງທີ່ມີມູນຄ່າສູງກວ່າ ຫ້າຮ້ອຍລ້ານກີບຂຶ້ນໄປ ຈະປັບໃໝຄັ້ງທີໜຶ່ງ ສອງລ້ານກີບ, ຄັ້ງທີສອງ ຫ້າລ້ານກີບ.

ສໍາລັບສິ່ງທີ່ບໍ່ສາມາດຕີເປັນມູນຄ່າໄດ້ ເຊັ່ນ: ການທວງເອົາເອກະສານ, ການທວງເອົາເດັກນ້ອຍ ຈະປັບໃໝຄັ້ງທີໜຶ່ງ ຫ້າແສນກີບ, ຄັ້ງທີສອງ ໜຶ່ງລ້ານກີບ.

ເງິນຄ່າປັບໃໝ ກ່ຽວກັບການຈັດຕັ້ງປະຕິບັດຄໍາຕັດສິນຂອງສານທັງໝົດ ໃຫ້ມອບເຂົ້າເປັນລາຍໄດ້ຂອງລັດ.

ຖ້າວ່າການນໍາໃຊ້ມາດຕະການຕ່າງໆ ທີ່ກ່າວມາຂ້າງເທິງນີ້ ຫາກຍັງບໍ່ໄດ້ຮັບຜົນ ພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ກໍມີສິດສະເໜີໃຫ້ນໍາໃຊ້ມາດຕາ 173 ຂອງກົດໝາຍອາຍາ, ແຕ່ຜູ້ຖືກປະຕິບັດຄໍາຕັດສິນຂອງສານ ຍັງຕ້ອງໄດ້ປະຕິບັດຕາມຄໍາຕັດສິນຂອງສານ ແລະ ມາດຕະການຕ່າງໆ ທີ່ພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ໄດ້ວາງໃສ່.

**ມາດຕາ 34. ການນໍາໃຊ້ມາດຕະການຕໍ່ນິຕິບຸກຄົນ**

ມາດຕະການຕ່າງໆທີ່ໄດ້ກໍານົດໄວ້ໃນມາດຕາ 30, 31 ແລະ ມາດຕາ 33 ຂອງກົດໝາຍສະບັບນີ້ ສາມາດນໍາໃຊ້ຕໍ່ນິຕິບຸກຄົນ ຫລື ບໍລິສັດທີ່ເປັນລູກໜີ້ ທີ່ພວມດໍາເນີນກິດຈະການຢູ່ ຫລືຖືກຍຸບເລີກ ຍົກເວັ້ນວັກສຸດທ້າຍຂອງມາດຕາ 33 ຂອງກົດໝາຍສະບັບນີ້. ສໍາລັບບໍລິສັດທີ່ສານຕັດສິນໃຫ້ລົ້ມລະລາຍນັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການລົ້ມລະລາຍຂອງວິສາຫະກິດ.

**ມາດຕາ 35(ໃໝ່). ຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ**

ຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ແມ່ນ ຄ່າສິ້ນເປືອງໃນການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ເຊັ່ນ: ຄ່າຮື້ຖອນ, ຄ່າຂົນສິ່ງຊັບສິ່ງຂອງອອກຈາກສະຖານທີ່, ຄ່າປົກປັກຮັກສາຊັບ..., ຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ແມ່ນ ຕົກຢູ່ໃນຄວາມຮັບຜິດຊອບຂອງຜູ່ເສັຍຄະດີ ແລະ ໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍ ຄ່າທໍານຽມສານ.

## ໝວດທີ 3
## ຂັ້ນຕອນ ແລະ ມາດຕະການ
## ໃນການຈັດຕັ້ງປະຕິບັດຄໍາຕັດສິນຄະດີອາຍາ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ, ໂທດປັບໃໝ, ໂທດຣິບຊັບ, ໂທດຣິບວັດຖຸສິ່ງຂອງ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ

**ມາດຕາ 36. ການຈັດຕັ້ງປະຕິບັດຄໍາຕັດສິນຄະດີອາຍາກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ ແລະ ໂທດປັບໃໝ**

ຂັ້ນຕອນ ແລະ ມາດຕະການໃນການຈັດຕັ້ງປະຕິບັດຄໍາຕັດສິນຄະດີອາຍາ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ ແລະ ໂທດປັບໃໝ ຕາມຄໍາຕັດສິນຂອງສານ ໃຫ້ປະຕິບັດຕາມທີ່ໄດ້ກໍາ ນົດໄວ້ໃນມາດຕາ 25 ຫາ ມາດຕາ 34 ຂອງກົດໝາຍສະບັບນີ້.

ສໍາລັບຜູ້ທີ່ຍັງປະຕິບັດໂທດຢູ່, ຜູ້ທີ່ໄດ້ຮັບການອະໄພຍະໂທດ ຫລື ພົ້ນໂທດແລ້ວ ກໍຕ້ອງປະຕິບັດຄໍາຕັດສິນຂອງສານ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ ແລະ ໂທດປັບໃໝ ເຊັ່ນດຽວກັນ.

**ມາດຕາ 37. ການຈັດຕັ້ງປະຕິບັດໂທດຣິບຊັບ ແລະຣິບວັດຖຸສິ່ງຂອງ**

ການຈັດຕັ້ງປະຕິບັດຄຳຕັດສິນຄະດີອາຍາກ່ຽວກັບໂທດຣິບຊັບ ແລະ ຣິບວັດຖຸສິ່ງຂອງ ໃຫ້ດຳເນີນຕາມທີ່ໄດ້ກຳນົດໄວ້ໃນຄຳຕັດສິນທີ່ກ່ຽວຂ້ອງນັ້ນທຸກປະການ ເຖິງວ່າຜູ້ຖືກຕັດສິນຍັງປະຕິບັດໂທດຢູ່, ໄດ້ຮັບການອະໄພຍະໂທດ ຫລື ພົ້ນໂທດແລ້ວກໍຕາມ.

**ມາດຕາ 38. ການຈັດຕັ້ງປະຕິບັດໂທດດັດສ້າງໂດຍບໍ່ຕັດອິດສະລະພາບ**

ການຈັດຕັ້ງປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບໂທດດັດສ້າງ ໂດຍບໍ່ຕັດອິດສະລະພາບ ໃຫ້ປະຕິບັດຕໍ່ພະນັກງານ ຫລື ບຸກຄົນທີ່ມີລາຍໄດ້ ເທົ່ານັ້ນ.

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງແຈ້ງຄຳຕັດສິນຂອງສານດັ່ງກ່າວ ໄປຍັງອົງການປົກຄອງ ຫລື ບ່ອນທີ່ຜູ້ຖືກປະຕິບັດຄຳຕັດສິນຂອງສານພວມເຮັດວຽກຢູ່ ເພື່ອຫັກເອົາເງິນຄ່າແຮງງານ ແລ້ວມອບເຂົ້າເປັນລາຍໄດ້ຂອງລັດ, ນອກຈາກນີ້ ຜູ້ກ່ຽວຍັງຈະຕ້ອງໃຊ້ແທນຄ່າເສັຍຫາຍທາງແພ່ງ ຕາມຄຳຕັດສິນຂອງສານອີກ.

**ມາດຕາ 39. ບຸລິມະສິດໃນການໃຊ້ແທນຄ່າເສັຍຫາຍທາງແພ່ງ, ໂທດປັບໃໝ, ໂທດຣິບຊັບ ຫລືຣິບວັດຖຸສິ່ງຂອງ**

ໃນການປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ, ໂທດປັບໃໝ, ໂທດຣິບຊັບ, ໂທດຣິບວັດຖຸສິ່ງຂອງນັ້ນ ຖ້າຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກບໍ່ສາມາດໃຊ້ແທນຄ່າເສັຍຫາຍທາງແພ່ງ, ໂທດປັບໃໝ, ໂທດຣິບຊັບ ແລະ ໂທດຣິບວັດຖຸສິ່ງຂອງ ພ້ອມກັນໄດ້ນັ້ນ ແມ່ນ ໃຫ້ປະຕິບັດການໃຊ້ແທນຄ່າເສັຍຫາຍທາງແພ່ງກ່ອນ ແລ້ວຈຶ່ງປະຕິບັດໂທດປັບໃໝ, ໂທດຣິບຊັບ, ໂທດຣິບວັດຖຸສິ່ງຂອງຕາມຫລັງ.

**ມາດຕາ 40. ການຈັດຕັ້ງປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບໂທດຕັດອິດສະລະພາບ**

ຫລັກການ, ລະບຽບການ, ວິທີການ ແລະມາດຕະການໃນການຈັດຕັ້ງປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບໂທດຕັດອິດສະລະພາບ ໄດ້ກຳນົດໄວ້ໃນກົດໝາຍອື່ນຕ່າງຫາກ.

## ໝວດທີ 4
## ການໂຈະ, ການປ່ຽນແປງ, ການຍົກເລີກ ແລະການລຶບລ້າງ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

**ມາດຕາ 41(ໃໝ່). ສາເຫດທີ່ພາໃຫ້ໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ການດຳເນີນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໂດຍພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຈະຖືກໂຈະໄວ້ຊົ່ວຄາວ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເປັນຄົນບ້າເສຍຈິດ ຫລື ຕົກຢູ່ໃນສະພາບຈຳເປັນ ເຊັ່ນ: ເຈັບປ່ວຍໜັກ ໂດຍມີການຢັ້ງຢືນຈາກຄະນະແພດຂັ້ນເມືອງ ຂຶ້ນໄປ;
2. ມີການຮື້ຟື້ນຄະດີ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນກົດໝາຍ ໂດຍການສະເໜີໂຈະຂອງໄອຍະການປະຊາຊົນສູງສຸດ;
3. ຜູ້ຖືກປະຕິບັດຄຳຕັດສິນຂອງສານໄດ້ອອກຈາກທ້ອງຖິ່ນ ສະຖານທີ່ຢູ່ອາໄສໄປກ່ອນແລ້ວ ໂດຍບໍ່ຮູ້ບ່ອນຢູ່ທີ່ແນ່ນອນ ຊຶ່ງມີການຢັ້ງຢືນຢ່າງຖືກຕ້ອງ;
4. ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເສຍຊີວິດ ແຕ່ຜູ້ກ່ຽວຍັງມີຜູ້ສືບທອດຢູ່;
5. ມີການສະເໜີໃຫ້ໂຈະຂອງໄອຍະການປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 49 (ໃໝ່) ຂໍ້ 4 ຂອງກົດໝາຍສະບັບນີ້;
6. ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງບໍ່ກົງກັບຕົວຈິງ ເຮັດໃຫ້ບໍ່ສາມາດຈັດຕັ້ງປະຕິບັດໄດ້.

ເມື່ອສາເຫດທີ່ພາໃຫ້ໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ກ່າວມາຂ້າງເທິງນີ້ ຫາກໝົດໄປແລ້ວ ແມ່ນ ໃຫ້ສືບຕໍ່ຈັດຕັ້ງປະຕິບັດ.

**ມາດຕາ 42. ສາເຫດທີ່ພາໃຫ້ມີການປ່ຽນແປງ, ຍົກເລີກ ຫລື ລົບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງ ສານ**

ສາເຫດທີ່ພາໃຫ້ມີການປ່ຽນແປງ, ຍົກເລີກ ຫລື ລົບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີດັ່ງນີ້:

1. ປະຕິບັດບໍ່ຖືກຕ້ອງຕາມຄຳຕັດສິນຂອງສານ;
2. ລະເມີດວິທີການ ຫລື ຂັ້ນຕອນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຫລື ລະເມີດລະບຽບກົດໝາຍອື່ນ;

ໃນກໍລະນີທີ່ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຫາກຖືກປ່ຽນແປງ, ຍົກເລີກ ຫລືລົບລ້າງແລ້ວ ສິ່ງທີ່ໄດ້ປະຕິບັດຕໍ່ກັນແລ້ວນັ້ນ ຕ້ອງໄດ້ສົ່ງຄືນ, ຟື້ນຟູ, ໃຊ້ແທນ ຫລືແກ້ໄຂຄືນ ໃຫ້ຖືກຕ້ອງຕາມສະພາບຄວາມເປັນຈິງ ກ່ອນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

**ມາດຕາ 43(ໃໝ່). ວິທີການໂຈະ, ການປ່ຽນແປງ, ການຍົກເລີກ ແລະການລົບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ເມື່ອກະຊວງຍຸຕິທຳ ຫລື ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໄດ້ຮັບຄຳຮ້ອງກ່ຽວກັບການໂຈະ, ການປ່ຽນແປງ, ການຍົກເລີກ ຫລື ການລົບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແລ້ວ ຕ້ອງໄດ້ພິຈາລະນາ ແລະ ຄົ້ນຄວ້າ; ຖ້າເຫັນວ່າມີເຫດຜົນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41(ໃໝ່) ແລະ 42 ຂອງກົດໝາຍສະບັບນີ້ ກະຊວງຍຸຕິທຳ ຫລື ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກໍຕ້ອງອອກຄຳສັ່ງໂຈະ, ປ່ຽນແປງ, ຍົກເລີກ ຫລື ລົບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລ້ວແຈ້ງໃຫ້ຂັ້ນລຸ່ມຂອງຕົນ, ໄອຍະການປະຊາຊົນ ແລະ ຄູ່ຄວາມ ຊາບພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ໃນກໍລະນີທີ່ເຫັນວ່າຄໍາຮ້ອງນັ້ນ ບໍ່ມີເຫດຜົນຕາມທີ່ໄດ້ກໍານົດໄວ້ໃນມາດຕາ 41(ໃໝ່) ແລະ 42 ຂອງກົດໝາຍສະບັບນີ້ແລ້ວ ກະຊວງຍຸຕິທໍາ ຫລື ຫ້ອງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ຕ້ອງແຈ້ງໃຫ້ຂັ້ນລຸ່ມຂອງຕົນ, ໄອຍະການປະຊາຊົນ ແລະ ຄູ່ຄວາມ ຊາບ ພາຍໃນກໍານົດສາມສິບວັນ ເຊັ່ນດຽວກັນ ແລະ ໃຫ້ສືບຕໍ່ຈັດຕັ້ງປະຕິບັດຄໍາຕັດສິນດັ່ງກ່າວ.

ອົງການຈັດຕັ້ງຂອງພັກ, ຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຫລື ບຸກຄົນ ນັ້ນ ບໍ່ມີສິດສັ່ງໃຫ້ປ່ຽນແປງ, ໂຈະ, ຍົກເລີກ, ລົບລ້າງ ຫລື ຂັດຂວາງ ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ.

### ມາດຕາ 44. ການຮັກສາສໍານວນຄະດີ

ສໍານວນຄະດີ ທີ່ໄດ້ຈັດຕັ້ງປະຕິບັດຄໍາຕັດສິນຂອງສານສິ້ນສຸດແລ້ວ ໃຫ້ຮັກສາໄວ້ ຊາວປີ ນັບແຕ່ວັນອອກຄໍາສັ່ງປິດສໍານວນຄະດີເປັນຕົ້ນໄປ, ຫລັງຈາກນັ້ນຈຶ່ງທໍາລາຍຖິ້ມ.

# ພາກທີ IV
# ການກວດກາການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ

## ໝວດທີ 1
## ອົງການກວດກາພາຍໃນ

### ມາດຕາ 45(ໃໝ່). ອົງການກວດກາພາຍໃນ

ອົງການກວດກາພາຍໃນ ມີ ດັ່ງນີ້:

- ກະຊວງຍຸຕິທໍາ;
- ພະແນກຍຸຕິທໍາແຂວງ, ນະຄອນ;
- ຫ້ອງການຍຸຕິທໍາເມືອງ, ເທດສະບານ.

### ມາດຕາ 46(ໃໝ່). ສິດ ແລະ ໜ້າທີ່ຂອງອົງການກວດກາພາຍໃນ

ສິດ ແລະໜ້າທີ່ຕົ້ນຕໍ ຂອງອົງການກວດກາພາຍໃນ ມີດັ່ງນີ້:

1. ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຂອງພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ;
2. ກວດກາຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກ ຂອງພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ;
3. ກວດກາການຄຸ້ມຄອງ ແລະ ການນໍາໃຊ້ລາຍຮັບ-ລາຍຈ່າຍ ກ່ຽວກັບການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ.

## ໝວດທີ 2
## ອົງການກວດກາພາຍນອກ

**ມາດຕາ 47(ໃໝ່). ອົງການກວດກາພາຍນອກ**

ອົງການກວດກາພາຍນອກ ມີດັ່ງນີ້:

- ສະພາແຫ່ງຊາດ ດ້ວຍການເຂົ້າຮ່ວມຂອງປະຊາຊົນ;
- ອົງການໄອຍະການປະຊາຊົນ.

**ມາດຕາ 48(ໃໝ່). ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ໃນການກວດກາ**

ສະພາແຫ່ງຊາດ ດຳເນີນການກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ.

**ມາດຕາ 49(ໃໝ່). ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນໃນການກວດກາ**

ໃນການຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ອົງການໄອຍະການປະຊາຊົນ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ສະເໜີໃຫ້ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານຂັ້ນຂອງຕົນ ລາຍງານສະພາບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ;
2. ສະເໜີໃຫ້ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານຂັ້ນຂອງຕົນ ຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງແກ່ຍາວ ຫລື ຄ້າງຄາໃນການຈັດຕັ້ງປະຕິບັດ ເພື່ອໃຫ້ຈັດຕັ້ງປະຕິບັດ ແລະປະສານສົມທົບກັນໃນການແກ້ໄຂ;
3. ກວດກາຄວາມຖືກຕ້ອງ ຂອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເປັນຕົ້ນການປະຕິບັດກົດໝາຍ, ການຊຳລະທາງແພ່ງ, ການເກັບ ແລະ ມອບຄ່າທຳນຽມສານ, ຄ່າອາກອນ ແລະ ຄ່າປັບໃໝ ເຂົ້າງົບປະມານ, ການຮິບຊັບເຂົ້າເປັນຂອງລັດ;
4. ສະເໜີໃຫ້ກະຊວງຍຸຕິທຳ ຫລື ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໂຈະ, ປ່ຽນແປງ, ຍົກເລີກ ຫລື ລົບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳ ນົດໄວ້ໃນມາດຕາ 43(ໃໝ່) ຂອງກົດໝາຍສະບັບນີ້;
5. ສັ່ງຟ້ອງຜູ້ບໍ່ປະຕິບັດຕາມຄຳຕັດສິນຂອງສານ ແລະ ຜູ້ລະເມີດກົດໝາຍອື່ນ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ສານປະຊາຊົນພິຈາລະນາຕັດສິນ ຕາມ ມາດຕາ 173 ແລະ ມາດຕາອື່ນຂອງກົດໝາຍອາຍາ ເມື່ອອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໄດ້ລາຍງານໃຫ້ອົງການໄອຍະການປະຊາຊົນແລ້ວ.

# ພາກທີ V(ໃໝ່)
# ຂໍ້ຫ້າມ

**ມາດຕາ 50(ໃໝ່). ຂໍ້ຫ້າມສຳລັບພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ຫ້າມພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກະທຳ ດັ່ງນີ້:

1. ກົດໜ່ວງຖ່ວງດຶງ, ເຂົ້າຂ້າງອອກຂາ, ເລືອກຈັດຕັ້ງປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
2. ເມີນເສີຍ, ລະເລີຍ ແລະ ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານ;
3. ໃຊ້ທ່າທີບໍ່ເໝາະສົມໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;
4. ສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວ;
5. ຮັບສິນບົນ.

**ມາດຕາ 51(ໃໝ່). ຂໍ້ຫ້າມສຳລັບຄູ່ຄວາມ**

ຫ້າມຄູ່ຄວາມ ກະທຳ ດັ່ງນີ້:

1. ຫລົບຫລີກການປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
2. ຊຸກເຊື່ອງ, ມອບ-ໂອນ ຊັບສິນ ເພື່ອຫຼີກລ້ຽງການປະຕິບັດຄຳຕັດສິນຂອງສານ;
3. ແອບອ້າງບຸກຄົນທີ່ມີສິດອຳນາດ ເພື່ອຂົ່ມຂູ່, ຖ່ວງດຶງແກ່ຍາວເວລາໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
4. ໃຫ້ສິນບົນ ແກ່ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
5. ຂົ່ມຂູ່, ຂັດຂວາງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
6. ງັດແງະ, ມ້າງເພ ແລະທຳລາຍຊັບສິນທີ່ຖືກອາຍັດ ຫລື ຍຶດ;
7. ທຳຮ້າຍ, ໃສ່ຮ້າຍປ້າຍສີ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

**ມາດຕາ 52(ໃໝ່). ຂໍ້ຫ້າມສຳລັບບຸກຄົນ ແລະການຈັດຕັ້ງອື່ນ**

ຫ້າມບຸກຄົນ ແລະ ການຈັດຕັ້ງອື່ນ ກະທຳ ດັ່ງນີ້:

1. ຍຸຍົງຄູ່ຄວາມ ບໍ່ໃຫ້ຈັດຕັ້ງປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
2. ຂັດຂວາງໃນການຈັດຕັ້ງປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
3. ເປັນສື່ກາງໃນການໃຫ້ ແລະຮັບສິນບົນ ແກ່ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
4. ຮັບໂອນຊັບສິນທີ່ຕົນຮູ້ ຫລື ຄວນຮູ້ວ່າ ຊັບສິນດັ່ງກ່າວຈະນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

# ພາກທີ VI
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

**ມາດຕາ 53(ໃໝ່). ນະໂຍບາຍຕໍ່ຜູ້ມີຜົນງານ**

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ລວມທັງ ບຸກຄົນ ແລະ ອົງການຈັດຕັ້ງອື່ນ ທີ່ໄດ້ໃຫ້ການຮ່ວມມື ແລະ ປະກອບສ່ວນເຂົ້າໃນວຽກງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຈະໄດ້ຮັບການຍ້ອງຍໍ ຫລື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 54(ໃໝ່). ມາດຕະການຕໍ່ຜູ້ລະເມີດ**

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ຄູ່ຄວາມ, ບຸກຄົນ ຫລືການຈັດຕັ້ງອື່ນທີ່ ໄດ້ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 50(ໃໝ່), 51(ໃໝ່) ແລະ 52(ໃໝ່) ຂອງກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ມາດຕະການທາງແພ່ງ ແລະ ມາດຕະການທາງອາຍາ ຕາມກໍລະນີ ເບົາ ຫລື ໜັກ.

**ມາດຕາ 55(ໃໝ່). ມາດຕະການສຶກສາອົບຮົມ**

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ຄູ່ຄວາມ, ບຸກຄົນ ຫລືການຈັດຕັ້ງອື່ນທີ່ລະເມີດກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຊຶ່ງມີລັກສະນະເບົາ ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 56(ໃໝ່). ມາດຕະການທາງວິໄນ**

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ລະເມີດກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສັຍຫາຍ ທີ່ມີມູນຄ່າຕ່ຳກວ່າ 500.000 ກີບ ແຕ່ບໍ່ມີຄວາມຈິງໃຈ, ຫລົບຫລີກຈາກຄວາມຜິດຂອງຕົນ ຈະຖືກປະຕິບັດວິໄນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດ ໂດຍບັນທຶກໄວ້ໃນສຳນວນເອກະສານ, ຊີວະປະຫວັດ ຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ, ການຍ້ອງຍໍ;
3. ປົດຕຳແໜ່ງ ຫລື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕ່ຳກວ່າເກົ່າ;
4. ໃຫ້ອອກຈາກລັດຖະການໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນ ຄືນຢ່າງຄົບຖ້ວນ.

**ມາດຕາ 57(ໃໝ່). ມາດຕະການທາງແພ່ງ**

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ຄູ່ຄວາມ, ບຸກຄົນ ຫລື ການຈັດຕັ້ງອື່ນ ທີ່ລະເມີດກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຊຶ່ງກໍ່ຄວາມເສັຍຫາຍ ໃຫ້ແກ່ຜູ້ອື່ນ ເນື່ອງມາຈາກການກະທຳທີ່ບໍ່ຖືກຕ້ອງຂອງຕົນ ກ່ຽວກັບການການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຈະຕ້ອງໃຊ້ແທນຄ່າເສັຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 58(ໃໝ່). ມາດຕະການທາງອາຍາ**

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ຄູ່ຄວາມ, ບຸກຄົນອື່ນ ທີ່ລະເມີດກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ເປັນການກະທຳຜິດທາງອາຍາ ເປັນຕົ້ນ : ການສວຍໃຊ້ອຳນາດ, ການຮັບສິນບົນ ແລະ ການໃຫ້ສິນບົນ, ການຂັດຂວາງການປະຕິບັດວຽກງານຂອງເຈົ້າໜ້າທີ່ ແລະ ການບໍ່ປະຕິບັດຄຳຕັດສິນ ຫລື ຄຳສັ່ງຂອງສານ ຈະຖືກລົງໂທດທາງອາຍາ ຕາມມາດຕາ 153, 157, 158, 173 ແລະມາດຕາອື່ນທີ່ກ່ຽວຂ້ອງຂອງກົດໝາຍອາຍາ.

## ພາກທີ VII
## ງົບປະມານ, ເຄື່ອງແບບ, ເຄື່ອງໝາຍ ແລະຕາປະທັບ

**ມາດຕາ 59(ໃໝ່). ງົບປະມານ**

ອົງການຄຸ້ມຄອງ ແລະອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນ ນຳໃຊ້ງົບປະມານຂອງລັດ. ເພື່ອຮັບປະກັນໃຫ້ແກ່ການປະຕິບັດໜ້າທີ່ວຽກງານ ຂອງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ລັດ ຕ້ອງສະໜອງງົບປະມານຢ່າງສົມເຫດສົມຜົນ.

**ມາດຕາ 60(ໃໝ່). ການຄຸ້ມຄອງ ແລະນຳໃຊ້ງົບປະມານ**

ງົບປະມານຂອງອົງການຄຸ້ມຄອງ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນ ນຳໃຊ້ເຂົ້າໃນການເຄື່ອນໄຫວຊີ້ນຳ, ຊຸກຍູ້, ກວດກາ ແລະຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

ການຄຸ້ມຄອງ ແລະ ນຳໃຊ້ງົບປະມານ ຕ້ອງໃຫ້ສອດຄ່ອງກັບລະບຽບກົດໝາຍ ກ່ຽວກັບງົບປະມານແຫ່ງລັດ.

**ມາດຕາ 61. ເຄື່ອງແບບ ແລະເຄື່ອງໝາຍ**

ເຄື່ອງແບບ ແລະ ເຄື່ອງໝາຍຂອງພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນລັດຖະມົນຕີວ່າການກະຊວງຍຸຕິທຳ ເປັນຜູ້ສະເໜີຕໍ່ລັດຖະບານເພື່ອພິຈາລະນາຕົກລົງ.

**ມາດຕາ 62. ຕາປະທັບ**

ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີຕາປະທັບ ເພື່ອນຳໃຊ້ໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ.

ຕາປະທັບຂອງຫ້ອງການ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 63. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 64 (ໃໝ່). ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ບັນດາມາດຕາທີ່ໄດ້ປັບປຸງໃນກົດໝາຍສະບັບນີ້ ມີຜົນສັກສິດພາຍຫລັງສາມສິບວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ສະພາແຫ່ງຊາດ
ປະທານ

ທອງສິງ ທຳມະວົງ